**HUGO BOSS**

# ຈັນຍາບັນຂອງຜູ້ຜະລິດ

**HUGO BOSS ມີຄວາມມຸ່ງໝັ້ນທີ່ຈະເຄົາລົບສິດທິມະນຸດແລະປົກປ້ອງສິ່ງແວດລ້ອມ ຈັນຍາບັນຂອງຜູ້ຜະລິດກໍານົດການຮ່ວມມືກັບຜູ້ຜະລິດ HUGO BOSS ໂດຍສະເພາະແມ່ນການປະຕິບັດຕໍ່ພະນັກງານເຊັ່ນເຈົ້າ ຂ້າງລຸ່ມນີ້ແມ່ນສິດແລະເສລີພາບທີ່ນາຍຈ້າງຕ້ອງຈັດໃຫ້ເຈົ້າ ເຈົ້າມີສິດທີ່ຈະເຂົ້າເຖິງຈັນຍາບັນຂອງຜູ້ຜະລິດຢ່າງເຕັມທີ່ ຍິ່ງໄປກວ່ານັ້ນນາຍຈ້າງຂອງເຈົ້າຕ້ອງຝຶກອົບຮົມເຈົ້າໃນຫົວຂໍ້ເຫຼົ່ານີ້ ຖ້າຫາກວ່າເຈົ້າມີຄໍາຮ້ອງຟ້ອງ ຄວາມບໍ່ແນ່ນອນ ຫຼືຄໍາຖາມໃດໆ ເຈົ້າສາມາດຕິດຕໍ່ HUGO BOSS ໂດຍກົງໄດ້ທຸກເວລາ ພວກເຮົາຍິນດີທີ່ຈະຊ່ວຍເຈົ້າ**

**ມະນຸດສະທໍາໃນບ່ອນເຮັດວຽກ**
ໃນຖານະເປັນພະນັກງານ ເຈົ້າມີສິດໄດ້ຮັບການ**ປະຕິບັດດ້ວຍຄວາມເຄົາລົບໃນການເຮັດວຽກ**ກຽດສັກສີ ຄວາມເປັນສ່ວນຕົວ ແລະເອກະລັກຂອງເຈົ້າຕ້ອງບໍ່ຖືກລະເມີດ

**ຫ້າມໃຊ້ແຮງງານເດັກ**
ຫ້າມໃຊ້ແຮງງານເດັກ **ໃນຖານະເປັນພະນັກງານ** ເຈົ້າຕ້ອງ**ມີອາຍຸຢ່າງໜ້ອຍ 15 ປີ** ແລະຈົບການສຶກສາພາກບັງຄັບ

**ຫ້າມການນໍາໃຊ້ແຮງງານດ້ວຍການບັງຄັບ**
ໃນຖານະເປັນພະນັກງານ ເຈົ້າສາມາດ**ເລືອກເຮັດວຽກຢູ່ບ່ອນນີ້ໄດ້** ແລະເຈົ້າບໍ່ຈໍາເປັນຕ້ອງຈ່າຍຄ່າທໍານຽມໃດໆສໍາລັບການເຮັດວຽກ ບໍ່ມີໃຜສາມາດບັງຄັບໃຫ້ເຈົ້າເຮັດວຽກຢູ່ທີ່ນີ້ຫຼືບ່ອນອື່ນທີ່ບໍ່ຕອບສະໜອງຄວາມປາດຖະໜາຂອງເຈົ້າ ເຈົ້າ**ມີອິດສະຫຼະທີ່ຈະລາອອກຈາກວຽກ**ຂອງເຈົ້າໄດ້ທຸກເວລາ ແລະເຈົ້າເປັນຜູ້ຮັກສາເອກະສານສ່ວນຕົວຂອງເຈົ້າເອງ

**ເສລີພາບໃນການຮ່ວມສໍາພັນແລະການເຈລະຈາ**
ໃນຖານະເປັນພະນັກງານ **ເຈົ້າສາມາດເຂົ້າຮ່ວມອົງການຈັດຕັ້ງ** ລວມທັງ**ການສ້າງຕັ້ງອົງການທີ່ກ່ຽວຂ້ອງກັບພະນັກງານຕາມກົດໝາຍ** ເຈົ້າມີສິດເຈລະຈາເງື່ອນໄຂການເຮັດວຽກ ໂດຍສະເພາະຄ່າຈ້າງ ແລະບໍ່ມີໃຜສາມາດລົງໂທດເຈົ້າສໍາລັບການເຮັດເຊັ່ນນັ້ນ

**ຄວາມເຄົາລົບແລະກຽດສັກສີ**
ໃນຖານະເປັນພະນັກງານ ເຈົ້າ**ມີສິດ**ໄດ້ຮັບ**ການປະຕິບັດທີ່ຍຸດຕິທໍາແລະເທົ່າທຽມກັນ** ໂດຍບໍ່ຄໍານຶງເຖິງອາຍຸ ເພດ ສີຜິວ ປັນຍາ ຄວາມພິການທາງສະຕິປັນຍາຫຼືຮ່າງກາຍ ຊາດກໍາເນີດ ສັນຊາດ ເຊື້ອຊາດ ຊົນເຜົ່າ ສາດສະໜາ ທັດສະນະຂອງໂລກ ຄວາມຄິດເຫັນທາງດ້ານການເມືອງ ສະມາຊິກສະຫະພັນຫຼືລັກສະນະສ່ວນບຸກຄົນອື່ນໆ **ບໍ່ມີໃຜມີສິດທີ່ຈະຂົ່ມເຫັງທາງເພດ ສໍາພັດຫຼືທາລຸນທ່ານທາງວາຈາຫຼືຈິດໃຈ**

**ຊົ່ວໂມງເຮັດວຽກ**
ເຮັດວຽກບໍ່ເກີນ 48 **ຊົ່ວໂມງຕໍ່ໜຶ່ງອາທິດ** ຖ້າເຈົ້າເຮັດວຽກ**ເກີນເວລາ**ບໍ່ເກີນ 60 **ຊົ່ວໂມງ**ຕໍ່ໜຶ່ງອາທິດ ເຮັດວຽກເພີ່ມໂມງເປັນໄປຕາມ**ຄວາມສະໝັກໃຈ**ແລະ**ໄດ້ຄ່າເຮັດວຽກເພີ່ມໂມງ** ມີສິດໄດ້ຮັບການພັກຜ່ອນຢ່າງໜ້ອຍໜຶ່ງວັນຕໍ່ໜຶ່ງອາທິດຫຼັງຈາກເຮັດວຽກບໍ່ເກີນ 6 ວັນຕິດຕໍ່ກັນ

**ຄ່າແຮງງານ**
ເຈົ້າຕ້ອງໄດ້ຮັບ**ຄ່າແຮງງານຂັ້ນຕໍ່າສຸດຢ່າງນ້ອຍ**ຕາມກົດໝາຍນອກຈາກນີ້ ເຈົ້າມີສິດໄດ້ຮັບຜົນປະໂຫຍດທາງດ້ານກົດຫມາຍອື່ນໆ ເຊັ່ນດຽວກັນ ເຊັ່ນຄ່າແຮງງານໃນການລາພັກເພື່ອກິດທຸລະສ່ວນຕົວ ການອອກລູກແລະອື່ນໆ

**ຄວາມປອດໄພໃນການເຮັດວຽກ**
**ນາຍຈ້າງມີຄວາມຮັບຜິດຊອບ**ໃນການຮັບປະກັນວ່າ**ບ່ອນເຮັດວຽກຂອງເຈົ້າປອດໄພ**ແລະ**ບໍ່ເປັນອັນຕະລາຍຕໍ່ສຸຂະພາບ**ຂອງເຈົ້າ ເຊັ່ນແສງສະຫວ່າງທີ່ບໍ່ພຽງພໍຫຼືສຽງບໍ່ດັງ **ຫ້ອງນໍ້າ**ຕ້ອງສະອາດ ແລະແຍກສໍາລັບ**ຜູ້ຊາຍ**ແລະ**ຜູ້ຍິງ** ເຈົ້າສາມາດນໍາ**ໃຊ້ຫ້ອງນໍ້າໄດ້ທຸກເວລາ** ນາຍຈ້າງຕ້ອງບໍ່ຫ້າມຫຼືຄວບຄຸມການໃຊ້ສິດດັ່ງກ່າວ ເຈົ້າມີສິດທີ່ຈະໄດ້ຮັບອຸປະກອນປ້ອງກັນສ່ວນບຸກຄົນເພື່ອເຮັດວຽກຕາມສະພາບການເຮັດວຽກຂອງເຈົ້າ

**ຈັນຍາບັນທຸລະກິດ**
HUGO BOSS **ຄາດວ່າ**ຜູ້ຜະລິດທັງໝົດ**ປະຕິບັດຕາມກົດໝາຍ** ແລະ**ມາດຕະຖານສາກົນ**ທີ່ໃຊ້ໄດ້ ຫ້າມມີການສໍ້ໂກງ ການສໍ້ລາດບັງຫຼວງ ແລະການໃຫ້ຜົນປະໂຫຍດທີ່ບໍ່ເຫມາະສົມໃນຮູບແບບໃດກໍ່ຕາມ

**ປົກປັກຮັກສາສິ່ງແວດລ້ອມ**
ນາຍຈ້າງຂອງເຈົ້າຕ້ອງ**ຫຼຸດຜົນກະທົບຕໍ່ສິ່ງແວດລ້ອມທີ່ເກີດຈາກກິດຈະກໍາທາງທຸລະກິດ** ຢ່າງໜ້ອຍຕ້ອງປະຕິບັດຕາມກົດໝາຍ ແລະລະບຽບການດ້ານສິ່ງແວດລ້ອມທີ່ກ່ຽວຂ້ອງ ຊັບພະຍາກອນທໍາມະຊາດຕ້ອງນໍາໃຊ້ຢ່າງຍືນຍົງແລະມີປະສິດທິພາບ **ການປົກປ້ອງຄົນສັດແລະສິ່ງແວດລ້ອມເປັນສິ່ງສໍາຄັນທີ່ສຸດ**

**ກົນໄກຮ້ອງຮຽນ**

ເຈົ້າ**ມີຄໍາຮ້ອງຟ້ອງ**ຫຼື**ຄໍາຖາມ**ກ່ຽວກັບ**ສິດທິ**ຂອງເຈົ້າ **ສະພາບການເຮັດວຽກ ຫຼືສິດທິມະນຸດ**ຫຼື ບໍ່ ເຈົ້າສາມາດຕິດຕໍ່**ລະບົບແຈ້ງເບາະແສທີ່ເປັນອິດສະຫຼະແລະບໍ່ຕ້ອງເສຍຄ່າໃຊ້ຈ່າຍ**ຂອງ HUGO BOSS ໄດ້ ແລະເລື່ອງຂອງເຈົ້າຈະຖືກເກັບໄວ້**ເປັນຄວາມລັບ**

ສະແກນ QR code ເພື່ອໃຫ້ໄດ້ຮັບລາຍລະອຽດການຕິດຕໍ່ (ພາສາຕ່າງໆ)

ຫຼື ຜ່ານການເຊື່ອມຕໍ່ດັ່ງຕໍ່ໄປນີ້
https://group.hugoboss.com/en/responsibility/partners/social-aspects

ຫຼື ຕິດຕໍ່ HUGO BOSS ໂດຍກົງ
Vendor_Sustainability@hugoboss.com

© 2021 HUGO BOSS